ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

# ແຈ້ງການ
# NOTICE

**ຮຽນ:** ທ່ານລູກຄ້າ ແລະ ຜູ້ຖືຮຸ້ນ ທຄຕລ ທີ່ເຄົາລົບ ແລະ ນັບຖືຢ່າງສູງ,
**ເລື່ອງ:** ຊີ້ແຈງກ່ຽວກັບກະແສຂ່າວລືໃນສື່ສັງຄົມອອນລາຍ.

- ອີງຕາມຂ່າວກ່ຽວກັບການຖືກລັກໂອນເງິນອອກຈາກບັນຊີຈຳນວນ4ຕື້ກີບ ໃນສັງຄົມອອນລາຍຄັ້ງວັນທີ 20/2/2026

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ)** ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ອີງຕາມການຕິດຕາມຂໍ້ມູນໃນສື່ສັງຄົມອອນລາຍ ທີ່ມີການສົ່ງຕໍ່ຂໍ້ມູນກ່ຽວກັບກໍລະນີການຖືກລັກໂອນເງິນ (ຖືກດູດເງິນ) ຈາກບັນຊີ ແລະ ມີການລະບຸຕົວເລກຄວາມເສຍຫາຍສູງເຖິງ 4 ຕື້ກີບ. **ທຄຕລ ຂໍຊີ້ແຈ້ງວ່າ ຜ່ານການກວດສອບຂອງທະນາຄານ ເຫດການດັ່ງກ່າວບໍ່ມີມູນຄວາມຈິງແຕ່ຢ່າງໃດ, ບັນຊີຜູ້ກ່ຽວບໍ່ສາມາດໂອນອອກໄດ້ເຖິງ 4 ຕື້ກີບ, ບໍ່ມີການໂອນເງິນອອກຈາກບັນຊີຕາມທີ່ກ່າວອ້າງ ແລະ ເງິນໃນບັນຊີຜູ້ກ່ຽວກໍ່ບໍ່ພຽງພໍທີ່ຈະສາມາດໂອນອອກໄດ້ຕາມຈຳນວນທີ່ເປັນຂ່າວ.**

**ທຄຕລ ຂໍຮຽກຮ້ອງ ໃຫ້ທຸກທ່ານຈົ່ງມີສະຕິໃນການເສບຂ່າວສານ ແລະ ຂໍໃຫ້ທຸກທ່ານເພີ່ມຄວາມລະມັດລະວັງໃນການບໍລິໂພກຂໍ້ມູນຂ່າວສານ.** ພ້ອມນັ້ນ, ເພື່ອເປັນການປ້ອງກັນຕົນເອງຈາກກຸ່ມມິດສາຊີບ **(Scammer)**, ທະນາຄານຂໍແນະນຳໃຫ້ລູກຄ້າທຸກທ່ານ ອັບເດດແອັບພລິເຄຊັນ **BCEL One** ໃຫ້ເປັນເວີຊັນຫຼ້າສຸດ ເພື່ອໃຫ້ລະບົບຄວາມປອດໄພເຮັດວຽກໄດ້ຢ່າງເຕັມປະສິດທິພາບ.

ຂໍຂອບໃຈໃນຄວາມຮ່ວມມື ແລະ ຄວາມເຊື່ອໝັ້ນທີ່ມີໃຫ້ກັບ ທຄຕລ ສະເໝີມາ.
ດ້ວຍຄວາມເຄົາລົບ ແລະ ນັບຖື,